ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
*******************

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ເລກທີ 10070/ຍທຂ
ນະຄອນຫຼວງວຽງຈັນ,ວັນທີ 22 ມີນາ/2012

**Regulation on Smoke Free Work Places of Public Work and Transport Sector**

# ຂໍ້ຕົກລົງ
# ຂອງລັດຖະມົນຕີວ່າການ
# ກ່ຽວກັບການສ້າງເຂດປອດຄວັນຢາສູບ ຂອງຂະແໜງການ
# ໂຍທາທິການ ແລະ ຂົນສົ່ງ

-ອີງຕາມ ກົດໝາຍວ່າດ້ວຍການຄວບຄຸມຢາສູບ ສະບັບເລກທີ07/ສພຊ, ລົງວັນທີ26 ພະຈິກ 2009.
-ອີງຕາມ ລຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການແຕ່ງຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງ ໂຍທາທິການແລະ ຂົນສົ່ງ ສະບັບເລກທີ 373/ນຍ, ລົງວັນທີ 22 ຕຸລາ 2007.
-ອີງຕາມ ຂອບສົນທິສັນຍາ ວ່າດ້ວຍການຄວບຄຸມຢາສູບ ຂອງອົງການອານາໄມໂລກ ລົງວັນທີ 27 ກຸມພາ2005.
-ອີງຕາມ ດຳລັດວ່າດ້ວຍການຫ້າມໂຄສະນາ ສົ່ງເສີມບໍລິໂພກ ຜະລິດຕະພັນຢາສູບ ສະບັບເລກທີ 369/ນຍ, ລົງວັນທີ 23/08/2010.

## ລັດຖະມົນຕີວ່າການກະຊວງ ໂຍທາທິການ ແລະ ຂົນສົ່ງອອກຂໍ້ຕົກລົງ:

## ໝວດທີ 1
## ຫຼັກການທົ່ວໄປ

ມາດຕາ 1. ຈຸດປະສົງ ແລະ ລະດັບຄາດໝາຍ

1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການສ້າງເຂດປອດຄວັນຢາສູບ ຂອງຂະແໜງການ ໂຍທາທິການ ແລະ ຂົນສົ່ງ ໂດຍສະເພາະ ໃນການຂົນສົ່ງໂດຍສານສາທາລະນະ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ແນໃສ່ປົກປ້ອງສຸຂະພາບ

ຂອງຜູ້ບໍ່ສູບຢາ,ໂດຍສະເພາະແມ່ຍິງຖືພາ,ແລະ ເດັກນ້ອຍ, ພ້ອມກັນນັ້ນ ກໍຍັງເປັນການສ້າງຄ່ານິຍົມ ແລະ ວັດທະນະທຳແບບໃໝ່ທີ່ທັນສະໄໝ ດ້ວຍການບໍ່ສູບຢາ.

2. **ລະດັບຄາດໝາຍ:**

ຄາດໝາຍຂອງການອອກຂໍ້ຕົກລົງສະບັບນີ້ແມ່ນເພື່ອ:

-ເຮັດໃຫ້ຍານພາຫະນະສາທາລະນະ ທຸກປະເພດ ລວມທັງສິ່ງອຳນວຍຄວາມສະດວກຕ່າງໆ ໃຫ້ປອດຄວັນຢາສູບ;

-ເຮັດໃຫ້ຂະແໜງການໂຍທາທິການ ແລະ ຂົນສົ່ງ ປອດຄວັນຢາສູບ ເພື່ອສ້າງສິ່ງແວດລ້ອມສະອາດ, ສົດໃສ ແລະ ປາສະຈາກມົນລະພິດທາງອາກາດ.

ມາດຕາ 2. **ການອະທິບາຍຄຳສັບ**

ຄຳສັບຕ່າງໆ ທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

1. **"ຄວັນຢາສູບມືສອງ"** ຫຼື **"ຄວັນຢາສູບໃນສິ່ງແວດລ້ອມ"** ໝາຍເຖິງ ຄວັນຢາທີ່ຜູ້ສູບພົ່ນອອກມາ ແລະ ຈາກການຈູດກອກຢາ ຫຼື ຜະລິດຕະພັນຢາສູບອື່ນໆ.
2. **"ອາກາດປອດຄວັນຢາສູບ"** ໝາຍເຖິງອາກາດທີ່ປາສະຈາກຄວັນຢາສູບຮ້ອຍສ່ວນຮ້ອຍ(100%)ລວມທັງອາກາດທີ່ບໍ່ສາມາດເຫັນ, ສຳຜັດ, ວັດແທກ ແລະ ມີກິ່ນ.
3. **"ການສູບຢາ"** ໝາຍເຖິງ ການສູບເອົາຄວັນຢາເຂົ້າ ແລະ ພົ່ນຄວັນອອກ.
4. **"ສະຖານທີ່ສາທາລະນະ"** ໝາຍເຖິງ ສະຖານທີ່ ທີ່ປະຊາຊົນທົ່ວໄປສາມາດເຂົ້າເຖິງ ຫຼື ນຳໃຊ້ຮ່ວມກັນໄດ້.
5. **ພື້ນທີ່ໃນຮົ່ມ, ພື້ນທີ່ໃນອາຄານ** ໝາຍເຖິງ ພື້ນທີ່ໃດໜຶ່ງທີ່ປົກຫຸ້ມດ້ວຍຫຼັງຄາ, ແອ້ມ, ກໍ່ຝາດ້ວຍວັດຖຸຊະນິດໃດໜຶ່ງ,ໂຄງສ້າງຖາວອນ ຫຼື ຊົ່ວຄາວ ກໍຕາມ.
6. **ຍານພາຫະນະຂົນສົ່ງໂດຍສານ** ໝາຍເຖິງ ຍານພາຫະນະຂົນສົ່ງມວນຊົນ, ໂດຍສານທົ່ວໄປ ທຸກປະເພດ ເຊັ່ນ: ລົດໂດຍສານປະຈຳທາງ, ລົດຂົນສົ່ງໂດຍສານທາງໄກ, ລົດຕັກຊີ, ລົດສອງແຖວ, ລົດບໍລິການທ່ອງທ່ຽວ, ລົດຈຳໂບ້, ລົດຕຸກຕຸກ, ສາມລໍ້ຈັກ ຫຼື ຖີບ, ລົດຈັກຮັບຈ້າງ, ເຮືອບິນ, ລົດໄຟ ກຳປັ່ນ, ເຮືອໂດຍສານ, ເຮືອທ່ອງທ່ຽວ, ເຮືອໄວ, ແພໂດຍສານ ແລະ ອື່ນໆ
7. **"ສະຖານີຂົນສົ່ງໂດຍສານ"** ໝາຍເຖິງ ສະຖານທີ່ ຮັບ-ສົ່ງ ແລະ ບໍລິການ ຜູ້ໂດຍສານ ລວມທັງສິ່ງອຳນວຍຄວາມສະດວກຕ່າງໆ.

ມາດຕາ 3. ຂອບເຂດການນຳໃຊ້ຂໍ້ຕົກລົງ

ຂໍ້ຕົກລົງສະບັບນີ້ ມີຂອບເຂດການນຳໃຊ້ທົ່ວ ຂະແໜງການ ໂຍທາທິການ ແລະ ຂົນສົ່ງ ທີ່ລະບຸໄວ້ໃນມາດຕາ 4 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ 2
## ການກຳນົດເຂດ ແລະ ຕິດປ້າຍ ຫ້າມສູບຢາ ຂອງຂະແໜງການ ໂຍທາທິການ ແລະ ຂົນສົ່ງ

**ມາດຕາ 4. ການກຳນົດເຂດຫ້າມສູບຢາ**

ສະຖານທີ່ຫ້າມສູບຢາທຸກປະເພດມີດັ່ງນີ້:

1. ສຳນັກງານຂອງກະຊວງໂຍທາທິການ ແລະ ຂົນສົ່ງ, ຫ້ອງການ, ກົມ, ສະຖາບັນ, ອົງການ, ສະພາວິທະຍາສາດ ແລະ ເຕັກໂນໂລຊີ, ສູນຝຶກ, ແລະ ກອງວິຊາການ, ພະແນກໂຍທາທິການ ແລະຂົນສົ່ງແຂວງ, ນະຄອນຫຼວງ ແລະຫ້ອງການໂຍທາທິການ ແລະ ຂົນສົ່ງ, ເມືອງ, ລັດວິສາຫະກິດ, ທຸກຫົວໜ່ວຍທຸລະກິດເປັນຕົ້ນ ອາຄານສະໜາມບິນ, ອາຄານສະຖານີລົດໄຟ, ທ່າເຮືອໂດຍສານ, ອາຄານສະຖານນີລົດຂົນສົ່ງໂດຍສານພາຍໃນ ແລະ ລະຫວ່າງປະເທດ ແລະ ສະຖານທີ່ອື່ນໆທີ່ກ່ຽວຂ້ອງ.

2. ຍານພາຫະນະຂົນສົ່ງໂດຍສານທຸກປະເພດ: ທາງບົກ, ທາງລົດໄຟ, ທາງນ້ຳ ແລະ ທາງອາກາດ.

**ມາດຕາ 5. ການກຳນົດປ້າຍ**

ບັນດາສະຖານທີ່ ທີ່ລະບຸໄວ້ໃນມາດຕາ 4 ຂອງຂໍ້ຕົກລົງສະບັບນີ້ ຕ້ອງຕິດປ້າຍຫ້າມສູບຢາທີ່ສາມາດເຫັນໄດ້, ໂດຍລະບຸເນື້ອໃນ ຫຼື ຂໍ້ຄວາມ ດັ່ງຕໍ່ໄປນີ້:

1. ເຄື່ອງໝາຍ ແລະ ການຕິດເຄື່ອງໝາຍໃນເຂດຫ້າມສູບຢາ

(ກ) ເຄື່ອງໝາຍຫ້າມສູບຢາເປັນຮູບວົງມົນຂອບສີແດງ, ພື້ນສີຂາວ, ຄວາມໜາຂອງຂອບສີແດງແມ່ນ 1 ສ່ວນ 10 ຂອງເສັ້ນຜ່າສູນກາງ ແລະ ຂະໜາດວົງມົນຕ່ຳສຸດບໍ່ໃຫ້ຫລຸດ 10 ຊັງຕີແມັດ ໂດຍມີຮູບກອກຢາ ແລະ ຄວັນຢາຢູ່ໃຈກາງ ແລະ ເສັ້ນສີແດງພາດທັບກອກຢາຈາກຂອບເທິງກ້ຳຊ້າຍຫາຂອບລຸ່ມກ້ຳຂວາ. ຄວາມຍາວຂອງກອກຢາຕ້ອງບໍ່ຕ່ຳກວ່າ 2 ສ່ວນ 3 ຂອງຂະໜາດວົງມົນ.

(ຂ) ປ້າຍຫ້າມສູບຢາຕ້ອງມີເຄື່ອງໝາຍຫ້າມສູບຢາ ແລະ ມີຂໍ້ຄວາມ "ຫ້າມສູບຢາ", **"ຂອບໃຈທີ່ທ່ານບໍ່ສູບຢາ"**, ເປັນພາສາອັງກິດ "No Smoking" ຫຼື "Thank you for Not Smoking" ເປັນຕົວອັກສອນສີດຳ.

(ຄ) ສຳລັບປ້າຍທີ່ມີເຄື່ອງໝາຍຂະໜາດ 10 ຊັງຕີແມັດ ມີຂໍ້ຄວາມ ຫຼື ບໍ່ມີຂໍ້ຄວາມກໍ່ໄດ້.

(ງ) ສະຖານທີ່ຕິດເຄື່ອງໝາຍໃນເຂດຫ້າມສູບຢາຕ້ອງຕິດໄວ້ຢູ່ບ່ອນເປີດເຜີຍ,ເຫັນໄດ້ງ່າຍ ແລະ ຈະແຈ້ງ ຢູ່ສະຖານທີ່ ທີ່ກຳນົດໄວ້ໃນມາດຕາ 4 ຂອງຂໍ້ຕົກລົງສະບັບນີ້ ຢູ່ທາງເຂົ້າ ຫຼື ໃນສະຖານທີ່ທີ່ເໝາະສົມ.

**2. ການຕິດເຄື່ອງໝາຍໃນສະຖານທີ່ອະນຸຍາດໃຫ້ສູບຢາ**

ການຕິດເຄື່ອງໝາຍໃນສະຖານທີ່ອະນຸຍາດໃຫ້ສູບຢາຕ້ອງປະຕິບັດດັ່ງນີ້:

(ກ) ເຄື່ອງໝາຍໃນສະຖານທີ່ອະນຸຍາດໃຫ້ສູບຢາເປັນຮູບວົງມົນ, ພື້ນສີຂາວ, ຄວາມໜາຂອງຂອບສີຟ້າແມ່ນ 1 ສ່ວນ 10 ຂອງເສັ້ນຜ່າສູນກາງ ແລະ ຂະໜາດວົງມົນຕ່ຳສຸດບໍ່ໃຫ້ຫລຸດ 10 ຊັງຕີແມັດ ໂດຍມີຮູບກອກຢາ ແລະ ຄວັນຢາຢູ່ໃຈກາງ. ຄວາມຍາວຂອງກອກຢາຕ້ອງບໍ່ຕ່ຳກວ່າ2ສ່ວນ 3 ຂອງຂະໜາດວົງມົນ. ໂດຍໃຫ້ມີຂໍ້ຄວາມສີຟ້າ"ບ່ອນສູບຢາ" ຫຼື "ບ່ອນອະນຸຍາດໃຫ້ສູບຢາ" ຂຽນເປັນພາສາອັງກິດ "Smoking Zone" ຫຼື "Smoking Area".

(ຂ) ການຕິດເຄື່ອງໝາຍໃນສະຖານທີ່ອະນຸຍາດໃຫ້ສູບຢາຕ້ອງຕິດໄວ້ຢູ່ບ່ອນເປີດເຜີຍ, ເຫັນໄດ້ງ່າຍ ແລະ ຈະແຈ້ງໃນສະຖານທີ່ທີ່ໄດ້ກຳນົດໄວ້.

(ຄ) ສະຖານທີ່ອະນຸຍາດໃຫ້ສູບຢາຕ້ອງເປັນສະຖານທີ່ສະເພາະໃຫ້ຫ່າງຈາກຕຶກ, ອາຄານຢ່າງໜ້ອຍ 20 ແມັດຂຶ້ນໄປ. ຖ້າມີເງື່ອນໄຂອາດຈັດຫ້ອງໜຶ່ງໄວ້ສະເພາະຕ່າງຫາກແຕ່ຕ້ອງເປັນຫ້ອງວົງປິດ ແລະ ຮັບປະກັນການລະບາຍອາກາດເພື່ອກັນບໍ່ໃຫ້ຄວັນຢາສູບອອກມາລົບກວນຜູ້ອື່ນ. ຕ້ອງຈັດໃຫ້ມີໂຖ ຫຼື ພາຊະນະອື່ນສຳລັບເຂ່ຍຂີ້ກອກຢາ ແລະ ຖິ້ມກົດກອກຢາ.

## ໝວດທີ 3
## ຂໍ້ຫ້າມກ່ຽວກັບຢາສູບ

ມາດຕາ 6. ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດຢາສູບ

ຫ້າມຜູ້ດຳເນີນທຸລະກິດຢາສູບມີການກະທຳ ດັ່ງນີ້:

1. ຫ້າມໂຄສະນາໃນທຸກຮູບແບບເພື່ອເປັນການຊຸກຍູ້ສົ່ງເສີມການສູບຢາ, ການຈຳໜ່າຍ ແລະ ການຊື້-ຂາຍ ຜະລິດຕະພັນຢາສູບໃນສະຖານທີ່ທີ່ກຳນົດໄວ້ໃນມາດຕາ 4 ຂອງຂໍ້ຕົກລົງສະບັບນີ້;
2. ຫ້າມຊື້-ຂາຍ ຜະລິດຕະພັນຮຽນແບບຜະລິດຕະພັນຢາສູບ;
3. ຫ້າມອຸປະຖຳໃນກິດຈະກຳສັງຄົມເຊັ່ນ: ງານບຸນປະເພນີ, ກິລາ, ສິນລະປະ ແລະ ວັດທະນະທຳຕ່າງໆ.
4. ຫ້າມບໍ່ໃຫ້ຂາຍຢາສູບໃຫ້ເດັກນ້ອຍທີ່ມີອາຍຸຕ່ຳກວ່າ 18 ປີ;

ມາດຕາ 7. ຂໍ້ຫ້າມສໍາລັບບຸກຄົນ ແລະ ການຈັດຕັ້ງ

ຫ້າມບຸກຄົນ ແລະ ການຈັດຕັ້ງມີການກະທໍາດັ່ງນີ້:

1. ຫ້າມສະໜັບສະໜູນການໂຄສະນາ, ສົ່ງເສີມການຂາຍຜະລິດຕະພັນຢາສູບ ແລະຮັບເອົາການອຸປະຖໍາຈາກອຸດສາຫະກໍາຢາສູບ;
2. ຫ້າມສູບຢາໃນສະຖານທີ່ທີ່ເກືອດຫ້າມ ຫຼື ສະຖານທີ່ທີ່ຕົນຮັບຜິດຊອບ.
3. ຫ້າມອະນຸຍາດໃຫ້ນໍາໃຊ້ສະຖານທີ່ທີ່ຕົນຮັບຜິດຊອບເປັນບ່ອນໂຄສະນາ, ສົ່ງເສີມການຂາຍຜະລິດຕະພັນຢາສູບ;
4. ຫ້າມຊັກຊວນ, ນໍາໃຊ້ຜູ້ອື່ນ ເປັນຕົ້ນ ເດັກນ້ອຍຕໍ່າກວ່າ 18 ປີ ສູບຢາ, ຊື້-ຂາຍຜະລິດຕະພັນຢາສູບ.

## ໝວດທີ 4

## ການຄຸ້ມຄອງ ແລະ ການກວດກາວຽກງານຄວບຄຸມຢາສູບ

ມາດຕາ 8. ອົງການຄຸ້ມຄອງ ແລະ ການກວດກາວຽກງານຄວບຄຸມຢາສູບ

ຫ້ອງການກະຊວງໂຍທາທິການ ແລະຂົນສົ່ງເປັນໃຈກາງຂັ້ນສູນກາງໃນການປະສານກັບບັນດາກົມ,ສະຖາບັນ, ອົງການ, ສະພາວິທະຍາສາດແລະ ເຕັກໂນໂລຊີ, ສູນຝຶກ, ແລະ ກອງວິຊາການ, ລັດວິສາຫະກິດ,ທຸກຫົວໜ່ວຍທຸລະກິດເປັນຕົ້ນສະຖານີລົດຂົນສົ່ງໂດຍສານພາຍໃນແລະລະຫວ່າງປະເທດແລະສະມາຄົມອື່ນໆທີ່ກ່ຽວຂ້ອງ.ພະແນກໂຍທາທິການ ແລະຂົນສົ່ງແຂວງ, ນະຄອນຫຼວງເປັນໃຈກາງຂັ້ນທ້ອງຖິ່ນໃນການປະສານກັບບັນດາກອງວິຊາການ,ລັດວິສາຫະກິດ, ທຸກຫົວໜ່ວຍທຸລະກິດແລະ ສະມາຄົມອື່ນໆທີ່ກ່ຽວຂ້ອງ.

## ໝວດທີ 5

## ອົງການຄຸ້ມຄອງ ແລະ ກວດກາວຽກງານຄວບຄຸມຢາສູບ

ມາດຕາ 9. ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງ ແລະ ກວດກາວຽກງານຄວບຄຸມຢາສູບ

ອົງການຄຸ້ມຄອງ ແລະ ກວດກາວຽກງານຄວບຄຸມຢາສູບມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄ້ວາ, ອອກລະບຽບການພາຍໃນກ່ຽວກັບການຫ້າມສູບຢາ ແລະ ການກໍານົດເຂດອະນຸຍາດໃຫ້ສູບຢາໃນສະຖານທີ່ທີ່ຕົນຮັບຜິດຊອບ;
2. ໂຄສະນາເຜີຍແຜ່ຂໍ້ກໍານົດກົດລະບຽບ ແລະລະບຽບການກ່ຽວກັບວຽກງານຄວບຄຸມຢາສູບ;
3. ປຸກລະດົມຂົນຂວາຍ,ຈັດຕັ້ງຂະບວນການຫ້າມສູບຢາ ແລະ ສະຫຼຸບ ຕີລາຄາປະເມີນຜົນ ແລະ ລາຍງານໃຫ້ຂັ້ນເທິງໃນແຕ່ລະໄລຍະ;

4. ຄວບຄຸມ ແລະ ຕິດຕາມກວດກາ ການຈັດຕັ້ງ ປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ;
5. ປະຕິບັດມາດຕະການທີ່ເໝາະສົມຕໍ່ຜູ້ລະເມີດ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 10. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆຕາມຄວາມເໝາະສົມ.

### ມາດຕາ 11. ມາດຕະການຕໍ່ຜູ້ລະເມີດ

-ສະຖານທີ່ຕ່າງໆທີ່ລະບຸໄວ້ໃນມາດຕາ 4 ຂອງຂໍ້ ຕົກລົງສະບັບນີ້ທີ່ບໍ່ມີປ້າຍຫ້າມສູບຢາຜູ້ຮັບຜິດຊອບສະຖານທີ່ດັ່ງກ່າວຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ບັນທຶກເປັນລາຍລັກອັກສອນດັ່ງນີ້:

- ຄັ້ງທີ 1: ສຶກສາອົບຮົມ ແລະ ກ່າວເຕືອນດ້ວຍປາກເປົ່າ;
- ຄັ້ງທີ 2: ກ່າວເຕືອນ ແລະ ບັນທຶກເປັນລາຍລັກອັກສອນ ແລະ ເຜີຍແຜ່ໃຫ້ປະຊາຊົນຮັບຊາບ; ຖ້າຍັງສືບຕໍ່ລະເມີດຈະຖືກປັບໃໝ

-ບຸກຄົນທີ່ສູບຢາໃນບ່ອນທີ່ຫ້າມສູບຢາຈະຖືກສຶກສາອົບຮົມ, ກ່າວເຕືອນ ແລະ ບັນທຶກເປັນລາຍລັກອັກສອນດັ່ງນີ້:

- ຄັ້ງທີ 1: ສຶກສາອົບຮົມ ແລະ ກ່າວເຕືອນດ້ວຍປາກເປົ່າ;
- ຄັ້ງທີ 2: ກ່າວເຕືອນ ແລະ ບັນທຶກເປັນລາຍລັກອັກສອນພ້ອມທັງເຜີຍແຜ່ໃຫ້ປະຊາຊົນຮັບຊາບ;ຖ້າຍັງສືບຕໍ່ລະເມີດຈະຖືກປັບໃໝ

- ສ່ວນມາດຕະການປັບໃໝຈະມີລະບຽບການສະເພາະຕ່າງຫາກ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 12. ການຈັດຕັ້ງປະຕິບັດ**

ມອບໃຫ້ຫ້ອງການ, ກົມ, ສະຖາບັນ, ອົງການ, ສະພາວິທະຍາສາດແລະ ເຕັກໂນໂລຊີ, ສູນຝຶກ, ກອງວິຊາການ, ພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ນະຄອນຫຼວງ, ບັນດາລັດວິສາຫະກິດ, ທຸກຫົວໜ່ວຍທຸລະກິດ ແລະ ບັນດາສະມາຄົມຕ່າງໆ ທີ່ຂື້ນກັບ ຂະແໜງກາໂຍທາທິການ ແລະ ຂົນສົ່ງ ຈົ່ງພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ມາດຕາ 13. ຜົນສັກສິດ**

ຂໍ້ ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ໄດ້ ນັບຕັ້ງແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ. ຂໍ້ ຕົກລົງ ແລະເອກະສານໃດ ທີ່ຂັດກັບເນື້ອໃນຂອງຂໍ້ ຕົກລົງສະບັບນີ້ ລ້ອນແຕ່ຖືກລົບລ້າງ.

ລັດຖະມົນຕີວ່າການ

**ສົມມາດ ພົລເສນາ**